ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 03682 /ກພສ
ນະຄອນຫລວງວຽງຈັນ, ວັນທີ: 30 ທັນວາ 2021

# ຂໍ້ຕົກລົງ

**ວ່າດ້ວຍ ສືບຕໍ່ການທົດລອງມອບສິດໃຫ້ດ່ານພາສີຊາຍແດນ ຮັບຮອງການໄດ້ຮັບສິດທິພິເສດດ້ານອັດຕາພາສີ ຕາມກອບສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA-FORM D) ສໍາລັບ ການນໍາເຂົ້າສິນຄ້າຂອງ 11 ບໍລິສັດ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 81/ສພຊ, ລົງວັນທີ 20 ມິຖຸນາ 2020;
- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍ ການອໍານວຍຄວາມສະດວກໃຫ້ແກ່ການນໍາເຂົ້າ-ສົ່ງອອກ, ການນໍາເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ໃນ ສປປ ລາວ;
- ອີງຕາມ ພັນທະສັນຍາຂອງ ສປປ ລາວ ໃນສັນຍາການຄ້າດ້ານສິນຄ້າອາຊຽນ ຫຼື ATIGA ທີ່ໄດ້ລົງນາມກັນໃນວັນທີ 26 ກຸມພາ 2009;
- ອີງຕາມ ບົດລາຍງານຂອງພະແນກນິຕິກໍາ ສະບັບເລກທີ /ພນກ, ລົງວັນທີ 29 ກໍລະກົດ 2021.

## ກົມພາສີ ຕົກລົງ:

ມາດຕາ 01: ເຫັນດີມອບສິດໃຫ້ ດ່ານພາສີສາກົນຊາຍແດນໃນຂອບເຂດທົ່ວປະເທດ ເປັນຜູ້ພິຈາລະນາການໄດ້ຮັບສິດທິພິເສດດ້ານອັດຕາພາສີຕາມກອບສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) ຫຼື ຟອມ D ເຊິ່ງເປັນເອກະສານປະກອບການແຈ້ງພາສີເປັນລາຍລະອຽດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 27 (ປັບປຸງ) ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ ລົງວັນທີ 29 ມິຖຸນາ 2020, ສໍາລັບບໍລິສັດ ແລະ ຜູ້ປະກອບການ ຈໍານວນ 11 ບໍລິສັດ ໂດຍບໍ່ຈໍາເປັນຕ້ອງຂໍໃບຢັ້ງຢືນສິດທິພິເສດດ້ານອັດຕາພາສີຈາກກົມພາສີ ເພື່ອເປັນການທົດລອງໃນການກໍານົດເງື່ອນໄຂຂອງຜູ້ປະກອບການທີ່ໄດ້ມາດຕະຖານ AEO ໃນຕໍ່ໜ້າຕາມລາຍຊື່ລຸ່ມນີ້:

1. ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ;
2. ບໍລິສັດ ເບຍລາວ ຈໍາກັດ;
3. ບໍລິສັດ ນິວຈີບເຊັງ ຈໍາກັດ;
4. ບໍລິສັດ ໂຄຄາ-ໂຄລາວ(ລາວ) ບອັດຕລິງ ຈໍາກັດ;
5. ບໍລິສັດ ລາວຟອດຊິຕີ ຈໍາກັດ;
6. ບໍລິສັດ ເອັກເປຣດຟູ໊ດ ກຣຸບ (ລາວ) ຈໍາກັດ;
7. ບໍລິສັດ ລາວໂມບາຍກຣຸບ ຈໍາກັດ;
8. ບໍລິສັດ ຢູນີລີເວີ ເຊີວິດ (ລາວ) ຈໍາກັດ;
9. ບໍລິສັດ ທິບໂກ້ ອັດສະຟັນ (ລາວ) ຈໍາກັດ;
10. ບໍລິສັດ ໂຕໂຢຕ້າລາວ ຈໍາກັດ; ແລະ
11. ບໍລິສັດ ຊີໄອການຄ້າ ຂາອອກ-ຂາເຂົ້າ ຈໍາກັດ.

ມາດຕາ 02: ມອບໃຫ້ດ່ານພາສີສາກົນຊາຍແດນບ່ອນນໍາເຂົ້າ ກວດກາ ແລະ ພິຈາລະນາການໄດ້ຮັບສິດທິພິເສດດ້ານອັດຕາພາສີຕາມກອບສັນຍາ ATIGA ຫຼື ຟອມ D ສໍາລັບສິນຄ້າທຸກປະເພດ ນອກຈາກ ພາຫະນະກົນຈັກ, ນໍ້າມັນເຊື້ອໄຟທຸກຊະນິດ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ.

ສໍາລັບບັນດານິຕິກໍາ-ເອກະສານອ້າງອີງ ແລະ ວິທີການກວດກາໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຟອມ D ແມ່ນໃຫ້ອີງໃສ່ ຄໍາແນະນໍາຂອງກົມພາສີ ສະບັບເລກທີ 03782/ກພສ, ລົງວັນທີ 06 ກຸມພາ 2016 ກ່ຽວກັບແຫຼ່ງກໍາເນີດສິນຄ້າ ແລະ ການໃຫ້ສິດທິພິເສດດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີຕ່າງໆ ທີ່ ສ.ປ.ປ ລາວ ເຂົ້າເປັນພາຄີ.

ມາດຕາ 03: ການພິຈາລະນາການໄດ້ຮັບສິດທິພິເສດດ້ານອັດຕາພາສີຕາມກອບສັນຍາ ATIGA ຫຼື ຟອມ D ສະບັບນີ້ ເປັນການທົດລອງຈັດຕັ້ງປະຕິບັດຊົ່ວຄາວ ສໍາລັບບໍລິສັດ ແລະ ຜູ້ປະກອບການທີ່ໄດ້ຮັບອະນຸຍາດເທົ່ານັ້ນ. ພາຍຫຼັງສໍາເລັດແລ້ວ ມອບໃຫ້ດ່ານພາສີສາກົນຊາຍແດນບ່ອນນໍາເຂົ້າ ສະຫຼຸບ-ລາຍງານການຈັດຕັ້ງປະຕິບັດໃຫ້ກົມພາສີ (ພະແນກນິຕິກໍາ) ຊາບ ເພື່ອປະເມີນຄືນຜົນໄດ້ຮັບ ແລະ ຄົ້ນຄວ້າ-ປັບປຸງໃນຂັ້ນຕໍ່ໄປ.

ມາດຕາ 04: ມອບໃຫ້ບັນດາພະແນກການອ້ອມຂ້າງກົມພາສີທີ່ກ່ຽວຂ້ອງ, ກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສໍາເລັດຜົນຕາມຄາດໝາຍ. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຂໍ້ຫຍຸ້ງຍາກ ໃຫ້ປະສານສົມທົບກັນ ແລະ ລາຍງານກົມພາສີເພື່ອມີທິດຊີ້ນໍາໃນການແກ້ໄຂຕາມກົດໝາຍແລະລະບຽບການ.

ມາດຕາ 05: ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ພາຍໃນກໍານົດ 06 (ຫົກ) ເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມພາສີ**

ກະຊວງ ການເງິນ
ກົມພາສີ

ພູເຂົາຄໍາ ວັນນະວົງໄຊ

<u>ບ່ອນສົ່ງ:</u>

- ທ່ານ ລັດຖະມົນຕີກະຊວງການເງິນ 01 ສະບັບ 'ເພື່ອໃຊ້ຕາງລາຍງານ';
- ທ່ານ ຮອງລັດຖະມົນຕີກະຊວງການເງິນ ທ່ານລະ 01 ສະບັບ 'ເພື່ອໃຊ້ຕາງລາຍງານ';
- ພະແນກກວດກາຄືນການແຈ້ງພາສີ 01 ສະບັບ;
- ພະແນກສະກັດກັ້ນແລະປາບປາມການລັກລອບພາສີ 01 ສະບັບ;
- ກອງຄຸ້ມຄອງພາສີ I-VII ກອງລະ 01 ສະບັບ;
- ສໍານຽນ 01 ສະບັບ.